**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

**ຫົວບົດສອບເສັງຈົບຊັ້ນ ມັດທະຍົມສຶກສາ ຕອນປາຍ (ມ.7) ລະບົບບຳລຸງທົ່ວໄປ**

**ສົກຮຽນ 2022-2023**

**ວິຊາ: ພາສາລາວ-ວັນນະຄະດີ** **ເວລາ: 120 ນາທີ**

## I. ພາກທິດສະດີ

**ຄຳແນະນຳ:** ໃຫ້ເລືອກເອົາຄຳຕອບທີ່ຖືກຕ້ອງທີ່ສຸດພຽງຂໍ້ດຽວ ໂດຍໝາຍຕິກ (✓) ເອົາຂໍ້ **ກ, ຂ, ຄ ຫຼື ງ** ຕາມທີ່ເລືອກໄດ້ໃສ່ເຈ້ຍຕອບ

1. ການອ່ານທີ່ດີມີປະສິດທິພາບແມ່ນແນວໃດ?

ກ. ຈັບໂຄງເລື່ອງໄດ້ ຂ. ຈັບຫົວເລື່ອງໄດ້

ຄ. ຈັບຮູບການແຕ່ງໄດ້ ງ. ຈັບໃຈຄວາມສຳຄັນໄດ້

2. ຄວນອ່ານໜັງສືປະເພດໃດ ເພື່ອພັດທະນາຄວາມຮູ້ໃຫ້ທັນກັບເຫດການຕ່າງໆ?

ກ. ວາລະສານ ຂ. ໜັງສືພິມ

ຄ. ບົດຄວາມວິຊາການ ງ. ໜັງສືວິທະຍາສາດ

3. ການຈຳແນກໃຫ້ເຫັນຈຸດພິເສດຂອງຕົວລະຄອນແມ່ນບົດຂຽນປະເພດໃດ?

ກ. ບົດຄວາມ ຂ. ບົດພິສູດ

ຄ. ບົດວິເຄາະ ງ. ບົດອະທິບາຍ

4. ບົດຄວາມມີຈຸດປະສົງໃຫ້ຜູ້ອ່ານໄດ້ຫຍັງເປັນສຳຄັນ?

ກ. ເນື້ອໃນຄວາມຮູ້ ແລະ ຄວາມຄິດ ຂ. ເນື້ອໃນຄວາມຮູ້ ແລະ ຄວາມເຂົ້າໃຈ

ຄ. ເນື້ອໃນຄວາມຮູ້ ແລະ ຄວາມເພີດເພີນ ງ. ເນື້ອໃນຄວາມຮູ້ ແລະ ຄວາມສາມາດ

5. ຂັ້ນຕອນການຂຽນບົດລາຍງານວິຊາການມີຫຍັງແດ່?

ກ. ກະກຽມ ແລະ ເລືອກຫົວບົດ ຂ. ກະກຽມ ແລະ ລົງມືຂຽນ

ຄ. ກະກຽມ ແລະ ສ້າງໂຄງຮ່າງ ງ. ກະກຽມ ແລະ ລວບລວມຂໍ້ມູນ

6. ໂຄງການມີຄວາມສຳພັນກັບວຽກງານໃດ?

ກ. ແຜນງານ ແລະ ຫຼັກຖານ ຂ. ແຜນງານ ແລະ ຫຼັກການ

ຄ. ແຜນງານ ແລະ ເຫດການ ງ. ແຜນງານ ແລະ ນະໂຍບາຍ

7. ປີ 1976 ເຖິງປັດຈຸບັນວັນນະຄະດີປະເພດຄຳຮ້ອຍກອງມີເນື້ອໃນເວົ້າເຖິງຫຍັງ?

ກ. ພາລະກິດປົກປັກຮັກສາ ແລະ ຕໍ່ຕ້ານພວກສັດຕູ

ຂ. ພາລະກິດປົກປັກຮັກສາ ແລະ ຮັກສາເຂດທີ່ໝັ້ນ

ຄ. ພາລະກິດປົກປັກຮັກສາ ແລະ ສ້າງສາປະເທດຊາດ

ງ. ພາລະກິດປົກປັກຮັກສາ ແລະ ປົວແປງທຳມະຊາດ

8. ການເຫັນດີ ຫຼື ຄັດຄ້ານເລື່ອງໃດເລື່ອງໜຶ່ງດ້ວຍເຫດ ແລະ ຜົນແມ່ນການເວົ້າປະເພດໃດ?

ກ. ສົນທະນາ ຂ. ອະພິປາຍ

ຄ. ພັນລະນາ ງ. ປາຖະກະຖາ

9. ຢາກຊະນະກັນໃນການໂຕ້ວາທີຕ້ອງເຮັດແນວໃດ?

ກ. ເວົ້າມີເຫດຜົນທີ່ໜ້າເຊື່ອຖື ຂ. ໃຊ້ຖ້ອຍຄຳສຳນວນທີ່ສຸພາບ

ຄ. ເວົ້າຕາມເວລາທີ່ກຳນົດໃຫ້ ງ. ເວົ້າມີເຫດຜົນຕາມເນື້ອໃນກຳນົດ

10. ພາສາໃດທີ່ເປັນພາສາໃນຕະກຸນຈີນ-ຕິເບດ?

ກ. ພາສາແຊກ ຂ. ພາສາຫໍ້

ຄ. ພາສາຕະໂອ້ຍ ງ. ພາສາອິວມຽນ

11. ຂໍ້ໃດ ແມ່ນຄຳຢືມຈາກພາສາສັນສະກິດທັງໝົດ?

ກ. ສຶກສາ, ສິປະລະ, ເກົ້າອີ້ ຂ. ສຶກສາ, ສິລະປະ, ໂມງ

ຄ. ສຶກສາ, ສິປະລະ, ຄລີນິກ ງ. ສຶກສາ, ສິປະລະ, ແພດ

12. ລັກສະນະຂອງເນື້ອໃນວັດຈະນານຸກົມມີຫຍັງແດ່?

ກ. ຮູບສັບ ແລະ ຄຳອະທິບາຍການວິໄຈ

ຂ. ຮູບສັບ ແລະ ຄຳອະທິບາຍຄວາມໝາຍ

ຄ. ຮູບສັບ ແລະ ຄຳອະທິບາຍການເກັບຂໍ້ມູນ

ງ. ຮູບສັບ ແລະ ຄຳອະທິບາຍການຫຍໍ້ຄວາມ

13. ຂໍ້ຄວາມໃດລຸ່ມນີ້ ມີເນື້ອໃນຄົບຖ້ວນກວ່າໝູ່?

ກ. ພັດຕາຄານ ຂ. ຕຳຫຼວດຈະລາຈອນ

ຄ. ປະຊາຊົນລາວທັງຊາດ ງ. ເອື້ອຍແກ້ບົດເຝິກຫັດ

14. ຄຳວ່າ "ພໍ່ ແລະ ອ້າຍໄປການແຕ່ເຊົ້າ" ຂໍ້ໃດ ແມ່ນໃຈຄວາມຂອງປະໂຫຍກ?

ກ. ພໍ່ໄປການ ຂ. ອ້າຍໄປການ

ຄ. ພໍ່ ແລະ ອ້າຍໄປການ ງ. ພໍ່ ແລະ ອ້າຍໄປການແຕ່ເຊົ້າ

15. ບົດລະຄອນ "ບ້າຍົດ" ພະຍາສຳມະລິດມີນິດໄສແນວໃດ?

ກ. ເມົາມົວນຳ ຍົດສັກຕຳແໜ່ງເພື່ອຄອບຄົວ

ຂ. ເມົາມົວນຳຍົດສັກຕຳແໜ່ງ ແລະ ເຫັນແກ່ຕົວ

ຄ. ເມົາມົວນຳຍົດສັກຕຳແໜ່ງເພື່ອຄວາມກ້າວຫນ້າ

ງ. ເມົາມົວນຳຍົດສັກຕຳແໜ່ງ ແລະ ຂົ່ມເຫັງຄົນດ້ອຍໂອກາດ

16. ສາມສະຫາຍຕົວລະຄອນໃນເລື່ອງ "ຟອງແມ່ນ້ຳຂອງ" ໄດ້ເອົາຫຍັງໄປສົ່ງດ້ານຮົບຕາເວັນຕົກສຽງໃຕ້?

ກ. ອາວຸດ ຂ. ຢາປົວພະຍາດ ຄ. ສະບຽງອາຫານ ງ. ເອກະສານ

17. ເລື່ອງ "ຟອງແມ່ນ້ຳຂອງ" ພັນລະນາດ້ານໃດຄົບຖ້ວນກວ່າໝູ່?

ກ. ທາດແທ້ຂອງນັກຮົບປະຕິວັດລາວ

ຂ. ທາດແທ້ຂອງການຕໍ່ສູ້ຂັບໄລ່ສັດຕູ

ຄ. ທາດແທ້ຂອງກຳລັງປະກອບອາວຸດ

ງ. ທາດແທ້ຂອງກຳລັງສັດຕູຜູ້ຮຸກຮານ

18. “ຕົ້ນໄມ້ໃຫຍ່ອາດຈະຫັກ ແລະ ໂດກ, ແຕ່ຕົ້ນໄມ້ນ້ອຍນັບເປັນຮ້ອຍໆພັນໆຕົ້ນທີ່ປົ່ງໜໍ່ ແຕກຈາວ ແລະ ເຕີບໃຫຍ່ຂຶ້ນແທນ” ຈາກບົດເລື່ອງ “ຜູ້ສືບທອດ” ຂໍ້ຄວາມນີ້ນັກແຕ່ງຢາກເວົ້າເຖິງຫຍັງ?

ກ. ການປູກໄມ້ທົດແທນ

ຂ. ການປົ່ງໜໍ່ຈໍ່ດອກບານຕະຫຼອດປີ

ຄ. ການສືບທອດພາລະກິດປະຕິວັດ

ງ. ການສືບທອດມໍລະດົກຂອງຄົນລາວ

19. ເລື່ອງ “ເສັ້ນທາງແຫ່ງຊີວິດ” ເຫຼັ້ມ I ຕົວລະຄອນຂ້ອຍໄດ້ພົບຊີວິດແຫ່ງຄວາມເປັນອິດສະລະຄືແນວໃດ?

ກ. ແສງສະຫວ່າງຂອງການປະຕິວັດ

ຂ. ແສງສະຫວ່າງຂອງສັນຍາ

ຄ. ແສງສະຫວ່າງຂອງການລວມລາວ

ງ. ແສງສະຫວ່າງຂອງລັດຖະບານປະສົມ

20. ກອນ “ຄົນກະວີ” ລຸ່ມນີ້ ມີເນື້ອໃນເວົ້າເຖິງຫຍັງ?

“ຄັນວ່າ ຄວາມຮູ້ໜ້ອຍ ຢ່າປະເອີບວ່າມີຫຼາຍ
ຢ່າໄດ້ເມົາມົວຫຼົງ ວ່າຕົນເປັນຄົນຮູ້”

ກ. ຄວາມໂລບມາກໂລພາ

ຂ. ຄວາມຫຼົງໄຫຼນຳຄວາມຮູ້

ຄ. ຄວາມອວດອົ່ງທະນົງຕົວ

ງ. ຄວາມປະເອີບໃຈທີ່ມີຄວາມຮູ້

## II. ພາກທັດແຕ່ງ

ຈົ່ງອະທິບາຍ, ພິສູດ ແລະ ວິຈານ ຄຳເວົ້າຂອງທ່ານ ໂຮ່ຈີມິນ ທີ່ວ່າ:

“ຄົນຜູ້ໜຶ່ງຕ້ອງມີວິຊາສະເພາະເລີກ ແລະ ຄຸນສົມບັດແດງ”

**ຄະນະກຳມະການອອກຫົວບົດ**